ໄຊເສດຖາ ຄາດຈະປັກດຳເຂົ້ານາແຊງຕົ້ນເດືອນໜ້າ
ການຜະລິດລະດູແລ້ງຂອງຊາວກະສິກອນເມືອງໄຊເສດຖາ ນະຄອນຫຼວງວຽງຈັນ
ໃນສົກປີນີ້ມີເນື້ອທີ່ແຜນການທັງໝົດ 745 ເຮັກຕາ ໃນນັ້ນເນື້ອທີ່ເຂົ້ານາແຊງ 495
ເຮັກຕາ ແລະເນື້ອທີ່ປູກ 250ເຮັກຕາ,
ຊຶ່ງປະຈຸບັນຊາວກະສິກອນໃນທົ່ວເມືອງໄດ້ສຸມໃສ່ການປັກດຳເຂົ້ານາແຊາງ
ແລະປູກພືດຜັກຕ່າງໆເປັນຂະບວນຢ່າງຟົດຟື້ນໂດຍຄາດວ່າຈະໃຫ້ສຳເລັດການປັກດຳນາແຊງໃນຕົ້ນ
ເດືອນກຸມພາ.

ອີງຕາມຂໍ້ມູນຈາກຫ້ອງການກະສິກຳ ແລະ ປ່າໄມ້ເມືອງໄຊເສດຖາ ໃຫ້ຮູ້ວ່າ:
ປະຈຸບັນຊາວກະສິກອນທົ່ວນະຄອນຫຼວງວຽງຈັນກຳລັງຂຸ້ນຂຽວໃສ່ການປູກພືດລະດູແລ້ງໂດຍສະເພາ
ະການປັກດຳນາແຊງ ແລະ ພືດຜັກຕ່າງໆ ເພື່ອໃຫ້ທັນລະດູການແນໃສ່ສະໜອງ
ຜົນຜະລິດໃຫ້ພຽງພໍກັບຄວາມຕ້ອງການຂອງຕະຫຼາດ ແລະມີສ່ວນແຮໄວ້
ສະເພາະຊາວກະສິກອນເມືອງໄຊເສດຖາ ໄດ້ສຸມໃສ່ການປັກດຳນາແຊງ
ແລະປູກພືດຕ່າງໆຢ່າງເປັນຂະບວນຟົດຟື້ນ, ຊຶ່ງໃນສົກປີ 2019-2020 ນີ້
ທົ່ວເມືອງມີແຜນການຜະລິດທັງໝົດ 745 ເຮັກຕາ ໃນນີ້ເນືອທີ່ນາແຊງ 495 ເຮັກຕາ,
ໃຊ້ແນວພັນເຂົ້າປູກ 36,6 ໂຕນ ສະມັດຕະພາບສະເລ່ຍ 5,13
ໂຕນ/ເຮັກຕາມາຮອດປັດຈຸບັນປະຕິບັດໄດ້ 225 ເຮັກຕາ ເທົ່າກັບ 45,45%
ຂອງເນື້ອທີ່ແຜນການໃນນີ້ນາປັກດຳໄດ້ 25 ເຮັກຕາ, ນາວ່ານໄດ້ 200 ເຮັກຕາ
ຄາດຈະໃຫ້ສຳເລັດໃນຕົ້ນເດືອນກຸມພາທີ່ຈະມາເຖິງນີ້.

ສຳລັບການຜະລິດພືດຜັກລະດູແລ້ງເນື້ອທີ່ແຜນການແມ່ນ250 ເຮັກຕາ ສະມັດຕະພາບສະເລ່ຍ 10,35
ໂຕນ/ເຮັກຕາຜົນຜະລິດສະເລ່ຍ 2,588 ໂຕນ, ປະຈຸບັນປະຕິບັດໄດ້ 130 ເຮັກຕາ ເທົ່າກັບ 52%
ຂອງແຜນການໃນພືດກິນໃບ 112 ເຮັກຕາ ແລະ ພືດກິນໝາກ 18 ເຮັກຕາ.

ພາບແລະຂ່າວຈາກ : ໜັງສືພິມເສດຖະກິດ-ສັງຄົມ
 1 / 1